

# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee


I. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ ........ 1

II. ການເຄື່ອນໄຫວວຽກງານ ຜູ້ນໍາພັກ ສປປ ລາວ ........ 5

III. ການເຄືອນໄຫວຂອງ ຄະນະນໍາ ຄຕພ ........ 5

IV. ການເຄື່ອນໄຫວຂອງ 3 ອົງການຈັດຕັ້ງມະຫາຊົນ ຄຕພ. ........ 7


**ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ**

**ປະຈໍາເດືອນ ພຶດສະພາ 2024**


**ສໍານັກງານ ຕັ້ງຢູ່ ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ**

**Tel : 021 414046, Email: Ri.dept.la@Gmail.com, Website: www.cerccp.org.la**

# I. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ

## 1. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງຕ່າງປະເທດ

### 1) ພັກກອມມູນິດຫວຽດນາມ

ວັນທີ 7/5/ 2024, ທາງການຫວຽດນາມ ໄດ້ຈັດພິທີສະເຫຼີມສະຫຼອງ 70 ປີ ແຫ່ງວັນສ້າງຕັ້ງແນວໂຮມປະເທດຊາດຫວຽດນາມ ແລະ ໄຊຊະນະດຽນບຽນຟູ (7/5/1954-2024). ໃຫ້ກຽດເຂົ້າຮ່ວມໂດຍສະຫາຍ ຟ້າມມິງຈິງ ກຳມະການກົມການເມືອງສູນກາງພັກ, ນາຍົກລັດຖະມົນຕີ, ມີການນຳ, ອະດີດການນຳຂັ້ນສູງຂອງພັກ-ລັດ ຂອງຫວຽດນາມ ແລະ ແຂກຕ່າງປະເທດ, ບັນດາກ້ອນກຳລັງ ແລະ ປະຊາຊົນ ແລະ ຕາງໜ້າຊາວຫວຽດນາມຢູ່ຕ່າງປະເທດເຂົ້າຮ່ວມເປັນຈຳນວນຫຼາຍ, ໄຊຊະນະຂອງດຽນບຽນຟູ ບໍ່ເປັນພຽງແຕ່ໄຊຊະນະຂອງປະຊາຊົນຫວຽດນາມ ແຕ່ຍັງເປັນແມ່ນໄຊຊະນະຂອງປະຊາຊົນລາວ ແລະ ກຳປູເຈຍ ທີ່ໄດ້ຮ່ວມສຳພັນສູ້ຮົບຕ້ານສັດຕູໂດຍຕລອດຜ່ານມາ. ໃນວັນດຽວກັນນີ້, ສະຫາຍ ເລອວ່າຍຈູງ, ເລຂາທິການສູນກາງພັກ, ຫົວໜ້າ ຄຕພ ຫວຽດນາມ ໄດ້ຕ້ອນຮັບ ທ່ານ Sebasstien Lecornu, ລັດຖະມົນຕີປ້ອງກັນປະເທດຝຣັ່ງ ໃນໂອກາດຢ້ຽມຢາມຫວຽດນາມ ແລະ ເຂົ້າຮ່ວມພິທີສະເຫຼີມສະຫຼອງ 70 ປີ ດັ່ງກ່າວ. ທັງສອງຝ່າຍໄດ້ຕີລາຄາສູງການພົວພັນຂອງສອງປະເທດ ທີ່ຜ່ານມາ, ເຫັນດີເສີມຂະຫຍາຍ ການພົວພັນໃຫ້ນັບມື້ເລິກເຊິ່ງຂຶ້ນກວ່າເກົ່າເພື່ອຜົນປະໂຫຍດຂອງປະຊາຊົນສອງປະເທດ. ພ້ອມນີ້ຍັງໄດ້ແລກປ່ຽນທັດສະນະໃນບັນຫາພາກພື້ນ ແລະ ສາກົນ.

ວັນທີ 16-18/5/2024, ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ ໄດ້ດຳເນີນກອງປະຊຸມຄົບຄະນະຄັ້ງທີ 9 ສະໄໝທີ 13, ໂດຍການເປັນປະທານ ຂອງ ສະຫາຍ ຫງວຽນຟູ້ຈ້ອງ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ. ກອງປະຊຸມໄດ້ປຶກສາຫາລືກ່ຽວກັບຮ່າງເອກະສານຕ່າງໆທີ່ດທາງ ຕໍ່ໜ້າເພື່ອຍື່ນສະເໜີຕໍ່ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຄັ້ງທີ 14 ຂອງພັກ, ທີ່ຈະໄຂຂຶ້ນໃນຕົ້ນປີ 2026 ແລະ ໄດ້ມີມະຕິຕົກລົງແຕ່ງຕັ້ງ: ສະຫາຍ ພົນເອກ ເລື່ອງເກືອງ, ກຳມະການກົມການເມືອງສູນກາງພັກ, ຫົວໜ້າກົມໃຫຍ່ການເມືອງ ກອງທັບປະຊາຊົນຫວຽດນາມ ເປັນຄະນະເລຂາທິການສູນກາງພັກ ແລະ ເປັນຜູ້ປະຈຳການຄະນະເລຂາທິການສູນກາງພັກ; ສະຫາຍ ເລມິງຮຶງ, ເລຂາທິການສູນກາງພັກ, ຫົວໜ້າຫ້ອງວ່າການສູນກາງພັກ ຮັບໜ້າທີ່ເພີ່ມເປັນ ຫົວໜ້າຄະນະຈັດຕັ້ງສູນກາງພັກ ແລະ ໃນວັນທີ 20–22/5/2024 ກອງປະຊຸມສະໄໝສາມັນ ເທື່ອທີ 7 ສະພາແຫ່ງຊາດ ຊຸດທີ XV ໄດ້ເລືອກຕັ້ງ: ສະຫາຍ ເຈິນແທງເໝິ້ນ ກຳມະການກົມການເມືອງສູນກາງພັກ, ຮອງປະທານຜູ້ປະຈຳການ ສະພາແຫ່ງຊາດຫວຽດນາມ ເປັນປະທານສະພາແຫ່ງຊາດ ສສ.ຫວຽດນາມ; ສະຫາຍ ພົນເອກ ໂຕເລິມ, ກຳມະການກົມການເມືອງສູນກາງພັກ ລັດຖະມົນຕີກະຊວງຕຳຫຼວດ ເປັນປະທານປະເທດແຫ່ງ ສສ.ຫວຽດນາມ.

### 2) ພັກກອມມູນິດຈີນ

ທ່ານ ສີຈິ້ນຜິງ, ປະທານປະເທດຈີນ ໄດ້ຢ້ຽມຢາ 3 ປະເທດໃນເອີຣົບ ຄື: ສ.ຝຣັ່ງ, ແຊັກບີ ແລະ ຮົງກາລີ ແຕ່ວັນທີ 5-10/5/2024, ໃນໂອກາດຢ້ຽມຢາມຝຣັ່ງ ທ່ານ ໄດ້ພົບປະກັບ ທ່ານ ເອັມມານູແອນ ມາຄຣົງ ປະທານາທິບໍດີຝຣັ່ງ, ສອງຝ່າຍໄດ້ຕີລາຄາຄືນການຮ່ວມມື ຕະຫຼອດ 60 ປີ ແຫ່ງການສ້າງສາຍພົວພັນທາງການທູດ, ສອງຝ່າຍໄດ້ລົງນາມໃນເອກະສານຮ່ວມມືສອງຝ່າຍ 20 ກວ່າສະບັບ ທີ່ກວມເອົາຂົງເຂດຕ່າງໆເຊັ່ນ ການພັດທະນາສີຂຽວ, ການບິນ, ຜະລິດຕະພັນກະສິກຳ, ການຄ້າ, ວັດທະນະທຳ ແລະ ອື່ນໆ. ພ້ອມນີ້, ຍັງໄດ້ມີການພົບປະ 3 ຝ່າຍ ກັບ ທ່ານ ເອັມມານູເອວ ມາຄຣົງ ແລະ ທ່ານ ນາງ ອູຊູລາ ວອນ ເດີເລເຢັນ, ປະທານຄະນະກຳມາທິການສະຫະພາບເອີຣົບ. ທ່ານ ສີ ຈິ້ນຜິງ ກ່າວໃນຖານະເປັນສອງກຳລັງທີ່ສຳຄັນຂອງໂລກ, ຈີນ ແລະ ສະຫະພາບເອີຣົບຄວນຮ່ວມມືກັນຢ່າງແໜ້ນແຟ້ນເພີ່ມຄວາມໄວ້ເນື້ອເຊື່ອໃຈກັນ ປະສານງານດ້ານຍຸດທະສາດ, ຊຸກຍູ້ໃຫ້ການພົວພັນຈີນ-ເອີຣົບຂະຫຍາຍຕົວຢ່າງໝັ້ນຄົງ, ປະກອບສ່ວນເຂົ້າໃນສັນຕິພາບ ແລະ ການພັດທະນາຂອງໂລກ. ຈາກນັ້ນ, ໄດ້ໄປຢ້ຽມຢາແຊັກບີ, ທ່ານ ສີຈິ້ນຜິງ ໄດ້ພົບກັບທ່ານ Alexsandar Vucic, ປະທານາທິບໍດີແຊັກບີ, ຊຶ່ງຜູ້ນຳທັງສອງໄດ້ເຫັນດີເພີ່ມທະວີການຮ່ວມມື ແລະ ຄຽງບ່າຄຽງໄຫຼ່ກັນກ້າວຂຶ້ນສູ່ເສັ້ນທາງຂະບວນການໃໝ່ແຫ່ງການສ້າງຄູ່ຮ່ວມຊາຕາກຳຈີນ-ແຊັກບີ ໃນຍຸກໃໝ່; ເຫັນດີລົງເລິກ ການພົວພັນຍຸດທະສາດຮອບດ້ານຈີນ-ແຊັກບີ. ສອງຝ່າຍໄດ້ລົງນາມເອກະສານການຮ່ວມມື 29 ສະບັບ ໃນຂົງເຂດເສດຖະກິດ. ສປ. ຈີນ ຈະສະໜັບສະໜູນ ແລະ ຊຸກຍູ້ ສັນຍາການຄ້າເສລີຈີນ-ແຊັກບີ ໃຫ້ມີຜົນສັກສິດນັບແຕ່ວັນທີ 1/7/2024 ເປັນຕົ້ນ

ໄປ; ສະໜັບສະໜູນແຊັກບີເປັນເຈົ້າພາບຈັດງານວາງສະແດງໂລກ ກ່ຽວກັບງານວິຊາການດ້ານຕ່າງໆ 2027; ເປີດກວ້າງການນຳເຂົ້າຜະລິດຕະພັນກະສິກຳທີ່ມີເອກະລັກ ແລະ ມີຄຸນນະພາບດີຂອງແຊັກບີ; ສະໜັບສະໜູນນັກວິທະຍາສາດໜຸ່ມແຊັກບີ 50 ຄົນເຂົ້າມາດຳເນີນການແລກປ່ຽນດ້ານການຄົ້ນຄວ້າວິທະຍາສາດຢູ່ຈີນໃນ 3 ປີ ຕໍ່ໜ້າ; ຈະເຊີນຊາວໜຸ່ມ-ເຍົາວະຊົນແຊັກບີ 300 ຄົນ ມາສຶກສາຮ່ຳຮຽນຢູ່ຈີນໃນ 3 ປີ ຕໍ່ໜ້າ; ສະແດງຄວາມຍິນດີທີ່ແຊັກບີເພີ່ມເສັ້ນທາງການບິນໂດຍກົງລະຫວ່າງນະຄອນຫຼວງແບນກຣາດ-ນະຄອນຊຽງໄຮ, ທັງຈະສົ່ງເສີມໃຫ້ວິສາຫະກິດຂົນສົ່ງທາງອາກາດຂອງສອງປະເທດເປີດເສັ້ນທາງການບິນໂດຍກົງລະຫວ່າງນະຄອນຫຼວງແບນກຣາດ-ນະຄອນກວາງໂຈ່ວ. ສຳລັບການຢ້ຽມຢາມຮັງກາລີ, ທ່ານ ສີຈິ້ນຜິງ ໄດ້ພົບກັບ ທ່ານ Viktor Orban, ນາຍົກລັດຖະມົນຕີ ຮັງກາລີ ຊຶ່ງທ່ານ Orban ໄດ້ກ່າວວ່າ ຮັງກາລີຈະສືບຕໍ່ສ້າງເງື່ອນໄຂທີ່ເປັນທຳຕໍ່ບັນດາບໍລິສັດລົງທຶນຂອງຈີນ ໃນຮັງກາລີ ; ສ່ວນທ່ານ ສີຈິ້ນຜິງກ່າວວ່າຈີນຈະສະໜັບສະໜູນ ຮັງກາລີ ໃນການມີບົດບາດສຳຄັນ ເພື່ອຊຸກຍູ້ການພົວພັນລະຫວ່າງຈີນ ແລະ ສະຫະພາບເອີຣົບ ; ຜູ້ນຳທັງສອງໄດ້ເປັນສັກຂີພະຍານເຊັ່ນຂໍ້ຕົກລົງເປັນຄູ່ຮ່ວມມື ຍຸດທະສາດລະຫວ່າງຈີນ-ຮັງກາລີ ແລະ ໄດ້ເຊັນບົດບັນທຶກຄວາມເຂົ້າໃຈໃນດ້ານຕ່າງໆ 18 ສະບັບ.

ວັນທີ 16-17/5/2024, ທ່ານ ວະລາດີເມຍ ປູຕິນ, ປະທານາທິບໍດີຣັດເຊຍໄດ້ຢ້ຽມຢາມ ສປ ຈີນ ເປັນປະເທດທຳອິດພາຍຫຼັງສາບານຕົນຮັບຕຳແໜ່ງສະໄໝທີ 5 ທັງເປັນໂອກາດຄົບຮອບ 75 ປີ ການພົວພັນທາງການທູດລັດເຊຍ-ຈີນ; ໄດ້ພົບປະກັບ ທ່ານ ສີຈິ້ນຜິງ ປະທານປະເທດຈີນ, ຜູ້ນຳທັງສອງ ໄດ້ເປັນພະຍານ ເຊັນຖະແຫຼງການ-ການຮ່ວມມື ຍຸດທະສາດຮອບດ້ານລັດເຊຍ-ຈີນ ແລະ ໄດ້ເຊັນສັນຍາຮ່ວມມື 80 ສະບັບ ທີ່ກວມເອົາວຽກງານປ້ອງກັນປະເທດ, ການຄ້າ, ການລົງທຶນ ແລະ ພະລັງງານ; ເຫັນດີໃຫ້ມີການແລກປ່ຽນການຢ້ຽມຢາມໃນທຸກຂັ້ນ; ເຫັນດີກຳນົດໃຫ້ ປີ 2024-2025 ເປັນປີແຫ່ງວັດທະນະທຳຈີນ-ລັດເຊຍ ໂດຍການຈັດກິດຈະກຳທາງວັດທະນະທຳຮ່ວມກັນ ເພື່ອສົ່ງເສີມຄວາມສະໜິດສະໜົມ ແລະ ຄວາມເຂົ້າໃຈກັນຂອງປະຊາຊົນສອງຊາດ. ໃນໂອກາດນີ້, ທ່ານ ປູຕິນ ໄດ້ເຂົ້າຮ່ວມງານວາງສະແດງສິນຄ້າໃນເມືອງ ຮາບິນ, ແຂວງຮາລົງຈຽງ ຂອງຈີນ ທີ່ມີຊາຍແດນຕິດກັບລັດເຊຍ ແລະ ມີປະຊາຊົນລັດເຊຍ ຈຳນວນຫຼາຍອາໄສຢູ່ເມືອງດັ່ງກ່າວ. ທ່ານ ປູຕິນ ຍັງກ່າວວ່າ ຈະຊຸກຍູ້ໃຫ້ ສະຫະພາບເສດຖະກິດ ຢູເຣເຊຍ (EAEU) ສອດຄ່ອງກັບໂຄງການ BRI ຂອງຈີນ. ສ່ວນການຄ້າສອງຝ່າຍລັດເຊຍ-ຈີນ 90% ແມ່ນໃຊ້ສະກຸນເງິນຣູໂບຂອງລັດເຊຍ ແລະ ເງິນຢວນຂອງຈີນ ເພື່ອຫຼຸດການໃຊ້ເງິນໂດລາ ໃຫ້ເຫຼືອ 0%; ລັດເຊຍ ຈະຊື້ລົດໄຟຟ້າຈາກຈີນ. ສ່ວນປະທານາທິບໍດີ ໂຈໄບເດັນ ຂອງອາເມລິກາ ປະກາດໃນວັນທີ 15/5/2024 ວ່າຈະເພີ່ມພາສີການນຳເຂົ້າສິນຄ້າຂອງຈີນ ເຊັ່ນ: ລົດໄຟຟ້າ ຈາກ 25% ເປັນ 100%, ແຜງໂຊລາເຊວຈາກ 25% ເປັນ 50%; ເຫຼັກ ແລະ ອາລູມິນຽມ ຈາກ 7,5% ເປັນ 25% ແລະ ສິນຄ້າອື່ນໆລວມມູນຄ່າ 18 ຕື້ໂດລາ.

**3) ສະຫະພັນຣັດເຊຍ**

ວັນທີ 7/5/2024, ທ່ານ ວາລາດີເມຍ ປູຕິນ ສາບານຕົນຂຶ້ນຮັບຕຳແໜ່ງປະທານາທິບໍດີສະຫະພັນຣັດເຊຍ ສະໄໝທີ 5 ຊຶ່ງທ່ານ ໄດ້ກ່າວວ່າ: ການປົກປ້ອງຣັດເຊຍພ້ອມທັງຮັບໃຊ້ປະຊາຊົນເປັນກຽດ ແລະ ໜ້າທີ່ອັນໃຫຍ່ຫຼວງຂອງຕົນ ຜົນປະໂຫຍດ ແລະ ຄວາມປອດໄພຂອງປະຊາຊົນຣັດເຊຍແມ່ນພາລະກິດຫຼັກ. ຣັດເຊຍຈະສາມາດຜ່ານຜ່າທຸກຄວາມຫຍຸ້ງຍາກ, ສືບຕໍ່ເພີ່ມທະວີສາຍພົວພັນທີ່ດີກັບທຸກປະເທດທີ່ຖືຣັດເຊຍເປັນຄູ່ຮ່ວມມືທີ່ໜ້າໄວ້ໃຈໄດ້ ຂະນະດຽວກັນລັດເຊຍຈະບໍ່ປະຕິເສດການປຶກສາຫາລືບັນຫາຕ່າງໆຊຶ່ງລວມທັງບັນຫາຄວາມໝັ້ນຄົງກັບປະເທດຕາເວັນຕົກ, ແຕ່ເງື່ອນໄຂເບື້ອງຕົ້ນຕ້ອງມີຄວາມສະເໝີພາບ ແລະ ເຄົາລົບເຊິ່ງກັນແລະກັນ. ຣັດເຊຍຈະຮ່ວມກັບບັນດາປະເທດເພື່ອນມິດໃນການສ້າງລະບຽບໂລກຫຼາຍຂົ້ວ ແລະ ລະບົບຄວາມໝັ້ນຄົງທີ່ສະເໝີພາບ. ໃນວັນທີ 10/5/2024, ທ່ານ ປູຕິນ ໄດ້ ສະເໜີແຕ່ງຕັ້ງທ່ານ ມິຄາອິວ ມິຊູສະຕິນ ເປັນນາຍົກລັດຖະມົນຕີສະໄໝທີ 2 ແລະ ສະພາດູມາຣັດເຊຍ ໄດ້ເຫັນດີຮັບຮອງການສະເໜີດັ່ງກ່າວ ດ້ວຍຄະແນນສຽງເຫັນດີ 375 ສຽງ ແລະ ງົດອອກສຽງ 57 ສຽງ ໂດຍບໍ່ມີຜູ້ຄັດຄ້ານ ແລະ ໃນວັນທີ 14/5/2024, ທ່ານ ວະລາດີເມຍ ປູຕິນ ໄດ້ລົງນາມລັດຖະດຳລັດອະນຸມັດບັນຊີລາຍຊື່ຄະນະໃນລັດຖະບານຊຸດໃໝ່ ຊຶ່ງມີຮອງນາຍົກລັດຖະມົນຕີ 10 ທ່ານ ແລະ ລັດຖະມົນຕີ 21 ທ່ານ. ໃນນັ້ນ, ໄດ້ແຕ່ງຕັ້ງ ທ່ານ ອັນເດ ເບໂລອູຊົບ, ຮອງນາຍົກລັດຖະມົນຕີ ຜູ້ທີ 1 ເຂົ້າຮັບໜ້າທີ່ ເປັນລັດຖະມົນຕີກະຊວງປ້ອງກັນປະເທດ ແທນທ່ານ ເຊີຣ໌ເກ ຊອຍກູ ທີ່ຖືກແຕ່ງຕັ້ງໄປຮັບໜ້າໃໝ່ເປັນ ເລຂາທິການສະພາຄວາມໝັ້ນຄົງ, ຮັບຜິດຊອບວຽກງານການຮ່ວມມືດ້ານການທະຫານ ແລະ

ວຽກມະຫາພາກດ້ານຄວາມໝັ້ນຄົງ, ແຕ່ງຕັ້ງ ທ່ານ ເຊີເກ ນາຣີສະກິນ ເປັນຫົວໜ້າສຳນັກງານຂ່າວລັບຕ່າງປະເທດ, ທ່ານ ອາເລັກຊານເດີ ວະຊິວເຢວິກ ບອດນີໂກຟ ເປັນຫົວໜ້າສຳນັກງານຄວາມໝັ້ນຄົງຂອງສະຫະພັນລັດເຊຍ.

## 2. ຂ່າວພົ້ນເດັ່ນໃນພາກພື້ນ ແລະ ສາກົນ

### 1) ສະພາບການໃນພາກພື້ນອາຊີ-ປາຊີຟິກ

- ການອ້າງກຳມະສິດໃນບາງເກາະທະເລຈີນໃຕ້ ລະຫວ່າງຟີລິບປິນ ແລະ ສປ ຈີນ ເລີ່ມເຄັ່ງຮ້ອນຂຶ້ນ ຕ່າງຝ່າຍຕ່າງອ້າງວ່າລະເມີດ ເຂດແດນທາງທະເລຂອງຕົນ. ສ່ວນອາເມຣິກາ ໄດ້ສົ່ງເຮືອຮົບ USS ແລ່ນເຂົ້າຊ່ອງແຄບໄຕ້ຫວັນ, ສປ ຈີນ ໄດ້ອອກຖະແຫຼງການປະນາມວ່າ ເປັນຄວາມຕັ້ງໃຈຍຸແຍ່ ໃຫ້ພາກພື້ນມີຄວາມເຄັ່ງຕຶງຂຶ້ນ ແລະ ກອງທັບປະຊາຊົນຈີນ ກຽມພ້ອມຮັບມືຕະຫຼອດເວລາ.

- ວັນທີ 20/5/2024, ທ່ານ ໄລ ຊິງເຕີ, ຈາກພັກປະຊາທິປະໄຕກ້າວໜ້າ ໄດ້ສາບານຕົນຮັບຕຳແໜ່ງ ຜູ້ບໍລິຫານເຂດປົກຄອງໄຕ້ຫວັນ. ຂະນະທີ່ ທາງການ ສປ ຈີນ ໄດ້ຢືນຢັນນະໂຍບາຍຈີນດຽວ, ເຂດພິເສດໄຕ້ຫວັນ ເປັນອັນດຽວກັບຈີນ.

- ໃນລະຫວ່າງວັນທີ 23-24/5/2024, ກອງທັບປົດປ່ອຍປະຊາຊົນຈີນ ໄດ້ຝຶກຊ້ອມຮົບອ້ອມຮອບໄຕ້ຫວັນ, ຈີນ-ກຳປູເຈຍ ກໍ່ໄດ້ຝຶກຊ້ອມຮົບຮ່ວມກັນ ໃສ່ຊື່ວ່າ "ມັງກອນຄຳ 2024" ໃນລະຫວ່າງວັນທີ 16-30/5/2024, ມີທະຫານເຂົ້າຮ່ວມທັງໝົດ 2000 ຄົນ ໂດຍມີການຊ້ອມຍິງດ້ວຍລູກປືນແທ້, ການຕ້ານການກໍ່ການຮ້າຍ, ການຊ່ວຍເຫຼືອດ້ານມະນຸດສະທຳ ເປັນການຝຶກຊ້ອມຮ່ວມກັນຄັ້ງທີ 6 ລະຫວ່າງກຳປູເຈຍ ແລະ ຈີນ ນັບແຕ່ປີ 2016 ເປັນຕົ້ນມາ, ສ່ວນກຳປູເຈຍ ຢຸດການຝຶກຊ້ອມກັບອາເມຣິກາ ແຕ່ປີ 2017.

### 2) ນາຍົກສິງກະໂປຄົນໃໝ່ສາບານຕົນເຂົ້າຮັບຕຳແໜ່ງ

ວັນທີ 15/5/2024, ທ່ານ ລໍເຣັນຊ໌ ວອງ(Lawrence Wong), ໄດ້ສາບານຕົນຮັບຕຳແໜ່ງເປັນນາຍົກລັດຖະມົນຕີຄົນທີ 4 ຂອງສິງກະໂປ, ເປັນຜູ້ນຳລຸ້ນໜຸ່ມ ທີ່ຖືກຄັດເລືອກຈາກພັກ ກິດປະຊາ (People's Action Party:PAP) ພັກດຽວກັນກັບທ່ານ ລີ ຊຽນ ລູງ(Lee Hsien Loong). ທ່ານ Wong, ເປັນຮອງນາຍົກລັດຖະມົນຕີ ແລະ ລັດຖະມົນຕີກະຊວງການເງິນຂອງສິງກະໂປ ແຕ່ປີ 2022. ທ່ານ Wong ໄດ້ດຳເນີນການປັບປຸງຄະນະລັດຖະບານ ໂດຍໄດ້ແຕ່ງຕັ້ງລັດຖະມົນຕີກະຊວງການຄ້າ ຂຶ້ນເປັນຮອງນາຍົກ. ສ່ວນ ທ່ານ ລີ ຍັງຢູ່ໃນຄະນະລັດຖະບານ ໃນຖານະເປັນລັດຖະມົນຕີອາວຸໂສ ດັ່ງທີ່ອະດີດນາຍົກລັດຖະມົນຕີສິງກະໂປໄດ້ປະຕິບັດຜ່ານມາ. ການສາບານຕົນຮັບຕຳແໜ່ງ, ທ່ານ Wong ໄດ້ກ່າວວ່າ: "ສະຖຽນລະພາບທາງການເມືອງຂອງສິງກະໂປໃນປັດຈຸບັນ ໄດ້ມາຈາກຜົນງານຂອງບັນພະບຸຣຸດຂອງພວກເຮົາ ແລະ ຈະປະຕິບັດໜ້າທີ່ຂອງຕົນເພື່ອຕໍ່ສູ້ກັບຄວາມກົດດັນຈາກສະພາບສາກົນ ເຮັດໃຫ້ສິງກະໂປ ທີ່ມີຄວາມເປັນຢູ່ດີຢູ່ແລ້ວ ໃຫ້ດີຂຶ້ນກວ່າເກົ່າ; ສິງກະໂປ ບໍ່ຈຳເປັນຕ້ອງເລືອກຝ່າຍໃດໜຶ່ງໃນບັນດາປະເທດມະຫາອຳນາດ, ສິງກະໂປພ້ອມຮັບຟັງ ແລະ ເປີດກວ້າງການຮ່ວມມືກັບທຸກປະເທດເພື່ອຜົນປະໂຫຍດຮ່ວມກັນຂອງທຸກຝ່າຍ.

### 3) ສະພາບປັ່ນປ້ອນຂໍ້ຂັດແຍ່ງອູແກຣນ-ຣັດເຊຍ

ໃນເດືອນທີ່ຜ່ານມາ ກອງກຳລັງຣັດເຊຍ ໂຈມຕີຫຼາຍເມືອງໃນແຄ້ວນໂດເນັດ ທາງພາກຕາເວັນອອກຂອງອູແກຣນ ໃນນັ້ນ ສາມາດຂັບໄລ່ທະຫານອູແກຣນ ອອກຈາກບັນດາເມືອງ ປະຊາຊົນ ຫຼາຍກວ່າ 10,900 ຄົນ ໄດ້ຍົກຍ້າຍອອກ. ສ່ວນກອງກຳລັງທະຫານຂອງອົງການນາໂຕ ສືບຕໍ່ຝຶກຊ້ອມຮົບ ໃກ້ກັບຊາຍແດນລັດເຊຍ, ຊຶ່ງເລີ່ມມາແຕ່ເດືອນ ມັງກອນ 2024, ໃສ່ຊື່ວ່າ Steadfast Defender 24 ທີ່ມີທະຫານຫຼາຍກວ່າ 90,000 ຄົນ ເຂົ້າຮ່ວມ ພ້ອມດ້ວຍກຳປັ່ນຫຼາຍກວ່າ 50 ລຳ, ເຮືອບິນສູ້ຮົບ, ຍົນເຮລິຄອບເຕີ ແລະ ໂດຣນ ຫຼາຍກວ່າ 80 ລຳ, ພ້ອມທັງຍານພາຫະນະສູ້ຮົບທາງບົກ 1,100 ລຳ. ສ່ວນອັງກິດ ໄດ້ປະກາດຈະສືບຕໍ່ຊ່ວຍອູແກຣນ ປະມານ 3 ຕື້ໂດລາສະຫະລັດຕໍ່ປີ ຈົນກວ່າຂໍ້ຂັດແຍ່ງຈະສິ້ນສຸດລົງ ແລະ ໄດ້ອະນຸຍາດໃຫ້ອູແກຣນ ນຳໃຊ້ອາວຸດ ຂອງອັງກິດ ເພື່ອໂຈມຕີໃນດິນແດນຂອງຣັດເຊຍ. ສ່ວນ ອູແກຣນ ໄດ້ໂຈມຕີເມືອງ Belgorod ຂອງຣັດເຊຍທີ່ມີຊາຍແດນຕິດກັບເມືອງ Kharkiv ຂອງອູແກຣນ ເຮັດໃຫ້ມີຜູ້ເສຍຊີວິດ 15 ຄົນ, ສູນຫາຍ 7 ຄົນ. ສ່ວນລັດຖະມົນຕີຕ່າງປະເທດອາເມລິກາ ໄດ້ຢ້ຽມຢາມອູແກຣນ ວັນທີ 14/5/2024 ເປັນຄັ້ງທີ 4 ນັບແຕ່ເກີດຂໍ້ຂັດແຍ່ງເພື່ອແຈ້ງວ່າອາເມລິກາ ຈະຊ່ວຍເຫຼືອດ້ານການທະຫານແກ່ອູແກຣນໃນງົບປະມານ 61 ຕື້ໂດລາ ທີ່ລັດຖະສະພາອາເມຣິກາຮັບຮອງໃນທ້າຍເດືອນ 4/2024 ຜ່ານມາ. ພ້ອມນັ້ນ, ລັດຖະສະພາອູແກຣນ ໄດ້ໄປຢ້ຽມຢາມ ແລະ

ພົບປະທານສະພາຕໍ່າອາເມຣິກາ ຮຽກຮ້ອງໃຫ້ອາເມຣິກາ ອະນຸມັດໃຫ້ອູແກຣນສາມາດນໍາໃຊ້ອາວຸດຊ່ວຍເຫຼືອຈາກອາເມຣິກາ ໂຈມຕີດິນແດນຣັດເຊຍ. ຊຶ່ງວັນທີ 23/5/2024, ສະພາຕໍ່າອາເມຣິກາ ແມ່ນເຫັນດີຕາມການສະເໜີຂອງອູແກຣນ ແລະ ກໍາລັງສະເໜີໃຫ້ກະຊວງປ້ອງກັນປະເທດອາເມຣິກາ ອະນຸມັດຕໍ່ການສະເໜີດັ່ງກ່າວ.

**4) ນາຍົກລັດຖະມົນຕີສະໂລວາກີໄດ້ຮັບບາດເຈັບຈາກການຖືກລອບຍິງ**

ວັນທີ 15 ພຶດສະພາ 2024, ທ່ານ ໂຣເບີດ ຟີໂກ(Robert Fico), ນາຍົກລັດຖະມົນຕີສະໂລວາກີ ໄດ້ຮັບບາດເຈັບຈາກການຖືກລອບຍິງຢູ່ເຂດເທູນຊິນຂອງປະເທດ ໃນຂະນະອອກພົບມວນຊົນທີ່ສາທາລະນະຊົນ ພາຍຫຼັງ ກອງປະຊຸມລັດຖະບານ, ປັດຈຸບັນອາການຂອງທ່ານ ຟີໂກ ໄດ້ພົ້ນຂີດອັນຕະລາຍແລ້ວ. ສ່ວນມືປືນທີ່ກໍ່ເຫດ ຖືກຕໍາຫຼວດຈັບໄດ້ແລ້ວຊຶ່ງເປັນຊາຍ ອາຍຸ 71 ປີ ລາວເປັນນັກຂຽນເສລີທີ່ສະໜັບສະໜູນຝ່າຍຄ້ານ. ນັກສັງເກດການໄດ້ໃຫ້ຂໍ້ສັງເກດວ່າ: ສະໂລວາກີ ເປັນສະມາຊິກ EU ແລະ NATO ແຕ່ນາຍົກລັດຖະມົນຕີ ຟີໂກ ບໍ່ເຫັນດີກັບນະໂຍບາຍສະໜອງອາວຸດຍຸດໂທປະກອນໄປຊ່ວຍອູແກຣນ, ຊຶ່ງອາດເປັນເຫດຜົນໜຶ່ງຂອງການກໍ່ເຫດຄັ້ງນີ້.

**5) ຂໍ້ຂັດແຍ່ງຢູ່ຕາເວັນອອກກາງ**

ໜຶ່ງເດືອນຜ່ານມາ, ອິດສະຣາແອນ ໄດ້ປະຕິບັດການໂຈມຕີທາງອາກາດຢ່າງໜັກໜ່ວງ ໃສ່ເມືອງຣາຟາ ທາງພາກໃຕ້ ແລະ ເມືອງຈາບາເລຍ ທາງພາກເໜືອຂອງແຫຼມກາຊາ ສາມາດຍຶດດ່ານ ທີ່ເຊື່ອມຕໍ່ລະຫວ່າງເມືອງຣາຟາ ກັບເອຢິບ ຊຶ່ງຜ່ານມາ ເອຢິບ ອາໄສດ່ານດັ່ງກ່າວຂົນເຄື່ອງຊ່ວຍເຫຼືອມະນຸດສະທໍາຊ່ວຍເຫຼືອປະຊາຊົນປາແລັດສະຕິນ ໃນແຫຼມກາຊາ ເຮັດໃຫ້ລົດບັນທຸກເຄື່ອງຊ່ວຍເຫຼືອຫຼາຍຄັນບໍ່ສາມາດເຂົ້າມາໄດ້. ຕໍ່ສະຖານະການຢູ່ແຫຼມກາຊາ ທີ່ມີປະຊາຊົນ ປາແລັດສະຕິນ ຫຼາຍກວ່າ 350,000 ຄົນ ກໍາລັງປະເຊີນໜ້າກັບການຂາດແຄນອາຫານ, ທີ່ຢູ່ອາໄສ, ຫຼາຍປະເທດສະແດງຄວາມເປັນຫ່ວງ, ປະນາມການກະທໍາຂອງອິດສະຣາແອນ ແລະ ຮຽກຮ້ອງໃຫ້ມີການຢຸດຕິຄວາມຂັດແຍ່ງໂດຍໄວ. ໃນນັ້ນມີ 3 ປະເທດໃນສະຫະພາບເອີຣົບຄື: ນອກແວ, ອຽກລັງ ແລະ ແອັດສະປາຍ ໄດ້ປະກາດຮັບຮູ້ປະແລັດສະຕິນເປັນລັດເອກະລາດໜຶ່ງໃນກອງປະຊຸມສະຫະປະຊາຊາດ ທີ່ຈັດຂຶ້ນໃນວັນທີ 28/5/2024 ຜ່ານມາ. ສ່ວນອາເມຣິກາ ໄດ້ກ່າວວ່າ ສະຖານະການຂອງປາແລັດສະຕິນບໍ່ຄວນຮັບຮູ້ພຽງຝ່າຍດຽວ, ຄວນຜ່ານການເຈລະຈາ ໂດຍກົງລະຫວ່າງອິດສະຣາແອນ ແລະ ປາແລັດສະຕິນ. ຂະນະທີ່, ອິດສະຣາແອນ ໄດ້ຮຽກເອາອັກຄະລັດຖະທູດຂອງຕົນປະຈໍາສາມປະເທດເອີຣົບດັ່ງກ່າວກັບຄືນປະເທດ. ປັດຈຸບັນ, ມີ 142 ປະເທດ ຈາກສະມາຊິກສະຫະປະຊາຊາດທັງໝົດ 193 ປະເທດ ທີ່ຍອມຮັບ ລັດປາແລັດສະຕິນ, ໃນນັ້ນມີ 9 ປະເທດ ສະມາຊິກອີຢູ ຄື: ບູນກາລີ, ໄຊປຣັດ, ສາທາລະນະລັດເຊັກ, ມອນຕາ, ໂປໂລຍ, ຣູມານີ, ຮົງກາລີສະໂລວາກີ ແລະ ຊູແອັດ. ສ່ວນການເຈລະຈາຢຸດຍິງລະຫວ່າງອິດສະຣາແອນ ແລະ ກຸ່ມຮາມາສ ທີ່ສະເໜີໂດຍເອຢິບ ແລະ ກາຕາ ບໍ່ປະສົບຜົນສໍາເລັດ ຍ້ອນອິດສະຣາແອນ ປະຕິເສດ.

**6) ເຫດການຍົນປະທານາທິບໍດີອີຣານຕົກ.**

ວັນທີ 19/5/2024, ທ່ານ ອິບຣາຮິມ ໄຣຊີ (Ebrahim Raisi), ປະທານາທິບໍດີອີຣານ ພ້ອມດ້ວຍ ທ່ານ Hossein Amir-Abdollahian, ລັດຖະມົນຕີຕ່າງປະເທດອີຣານ; ທ່ານ Malek Rahmati, ເຈົ້າແຂວງອາແຊກໄບຊານຕາເວັນອອກຂອງອີຣານ ແລະ ຄະນະລັດຖະບານຄົນອື່ນໆ ລວມທັງໝົດ 8 ທ່ານ ໄດ້ເສຍຊີວິດ ຈາກອຸປະຕິເຫດຍົນຕົກ ຍ້ອນສະພາບອາກາດ ຢູ່ເຂດຊາຍແດນລະຫວ່າງອາແຊກໄບຊານ ກັບ ອີຣານ ພາຍຫຼັງເດີນທາງຈາກການໄປຮ່ວມເປີດການກໍ່ສ້າງເຂື່ອນໄຟຟ້າ ກັບປະທານາທິບໍດີອາແຊກໄບຊານ. ທ່ານ ອາລີ ຄາເມເນອີ(Ali Khamenei), ຜູ້ນໍາສູງສຸດຂອງອີຣານ ໄດ້ປະກາດໄວ້ອາໄລ ເຫດການດັ່ງກ່າວທົ່ວປະເທດ ເປັນເວລາ 5 ວັນ. ອີງຕາມລັດຖະທໍາມະນູນຂອງອີຣານ, ຈະຕ້ອງມີການເລືອກຕັ້ງປະທານາທິບໍດີຄົນໃໝ່ພາຍໃນ 50 ວັນ ຫຼັງຈາກຜູ້ນໍາເສຍຊີວິດ, ສະນັ້ນ, ທາງການອີຣານ ຈຶ່ງກໍານົດເອົາວັນທີ 28/6/2024 ເປັນວັນເລືອກຕັ້ງປະທານາທິບໍດີຄົນໃໝ່. ໃນໄລຍະນີ້ ແມ່ນ ທ່ານ ໂມຮາມັດ ມັອກເບີ (Mohammad Mokhber), ຮອງປະທານາທິບໍດີຄົນທີ 1 ໃນຈໍານວນຮອງປະທານາທິບໍດີທັງໝົດ 12 ທ່ານ ເປັນປະທານາທິບໍດີຊົ່ວຄາວ (ອີຣານ ບໍ່ມີຕໍາ ແໜ່ງນາຍົກລັດຖະມົນຕີ ແຕ່ປີ 1989 ເປັນຕົ້ນມາ, ປະທານາທິບໍດີ ເປັນຫົວ ໜ້າລັດຖະບານ).

## II.ການເຄື່ອນໄຫວອວຽກງານ ຜູ້ນຳພັກ ປປ ລາວ.

### 1) ຄະນະຜູ້ແທນຂັ້ນສູງຂອງ ພັກ ປປ ລາວ ຢ້ຽມຢາມສັນທະວະໄມຕີ ສ. ກູບາ



ວັນທີ 04-07/5/2024, ສະຫາຍ ປອ ບຸນທອງ ຈິດມະນີ, ກຳມະການກົມການເມືອງສູນກາງພັກ, ຜູ້ປະຈຳການຄະນະເລຂາທິການສູນກາງພັກ, ຮອງປະທານປະເທດແຫ່ງ ສປປ ລາວ ພ້ອມດ້ວຍຄະນະ ເຄື່ອນໄຫວຢ້ຽມຢາມ ສັນທະວະໄມຕີ ສ.ກູບາ ເພື່ອເປັນການປະກອບສ່ວນອັນສຳຄັນ ເຂົ້າໃນການເພີ່ມພູນຖູນສ້າງ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບທີ່ເປັນມູນເຊື້ອອັນດີງາມ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດລາວ-ກູບາ ໃຫ້ນັບມື້ແໜ້ນແຟ້ນຍິ່ງໆຂຶ້ນ. ສອງຝ່າຍ ໄດ້ມີການພົບປະແລກປ່ຽນ ແລະ ຈັດກອງປະຊຸມສຳມະນາທິດສະດີ ແລະ ພຶດຕິກຳຕົວຈິງ ລະຫວ່າງ ສອງພັກເປັນຄັ້ງທີ 2, ເພື່ອແລກປ່ຽນບົດຮຽນ ເຊິ່ງກັນແລະກັນ; ພົບປະເຮັດວຽກ ລະຫວ່າງ ສອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກລາວ-ກູບາ. ໃນໂອກາດດັ່ງກ່າວ, ຄະນະຜູ້ແທນຂັ້ນສູງ ພັກ ປປ ລາວ ໄດ້ເຂົ້າຢ້ຽມຂໍ່ານັບ ສະຫາຍ ມີເກນ ດຽດ ກາເນນ, ເລຂາທິການທີໜຶ່ງ ຄະນະບໍລິຫານງານສູນກາງພັກ, ປະທານປະເທດ ແຫ່ງ ສ.ກູບາ. ນອກນີ້, ຄະນະຜູ້ແທນລາວຍັງໄດ້ໄປຢ້ຽມຢາມພື້ນຖານເສດຖະກິດ, ສະຖານທີ່ສຳຄັນທາງປະຫວັດສາດ ແລະ ວັດທະນະທຳ ຈຳນວນໜຶ່ງໃນນະຄອນຫຼວງລາຮາວານ.

## III. ການເຄື່ອນໄຫວຂອງ ຄະນະນຳ ຄຕພ

### 1) ຄະນະຜູ້ແທນພັກກອມມູນິດຈີນ ຢ້ຽມຢາມ ແລະ ເຮັດວຽກ ຢູ່ ສປປ ລາວ



ໃນລະຫວ່າງວັນທີ 9-12/5/2024, ຄະນະຜູ້ແທນ ຂອງ ພັກກອມມູນິດຈີນ ນຳໂດຍ ສະຫາຍ ຈ້າວ ຊື້ທົ່ງ, ຜູ້ຊ່ວຍຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຈີນ ພ້ອມດ້ວຍຄະນະ ໄດ້ມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ ເພື່ອຮ່ວມກັນຕີລາຄາຄືນ ການຈັດຕັ້ງປະຕິບັດ ແຜນແມ່ບົດວ່າດ້ວຍ ການສ້າງຄູ່ຮ່ວມຊາຕາກຳ ລາວ-ຈີນ ໃນໄລຍະຜ່ານມາ ແລະ ກຳນົດທິດທາງການຈັດຕັ້ງປະຕິບັດແຜນແມ່ບົດສະບັບໃໝ່ (ປີ 2024-2028) ໃຫ້ມີມາດຕະຖານ ແລະ ຄຸນນະພາບສູງກວ່າເກົ່າ; ປະກອບເຂົ້າໃນການຈັດຕັ້ງປະຕິບັດແຜນແມ່ບົດ, ແຜນການຮ່ວມມື ລະຫວ່າງ ສອງພັກ ແລະ ການຈັດຕັ້ງຜັນຂະຫຍາຍບັນດາເນື້ອໃນຈິດໃຈ ທີ່ການນຳສອງພັກ, ສອງລັດ ລາວ-ຈີນ ໄດ້ຕົກລົງເປັນເອກະພາບກັນ ໃຫ້ປະກົດຜົນເປັນຈິງ. ໃນໂອກາດນີ້, ຄະນະຜູ້ແທນດັ່ງກ່າວ ໄດ້ເຂົ້າຢ້ຽມຂໍ່ານັບ ສະຫາຍ ບຸນທອງ ຈິດມະນີ, ກຳມະການກົມການເມືອງ ຜູ້ປະຈຳການ ຄະນະເລຂາທິການສູນກາງພັກ, ຮອງປະທານປະເທດ ແຫ່ງ ສປປ ລາວ, ສະຫາຍ ຄຳພັນ ເຜີຍຍະວົງ, ເລຂາທິການສູນກາງພັກ, ຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ, ປະທານສະພາທິດສະດີສູນກາງພັກ; ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ແລະ ໄດ້ພົບປະເຮັດວຽກກັບ ສະຫາຍ ວາລະໄຊ ເລັ່ງສະຫວັດ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ; ຈັດກອງປະຊຸມແລກປ່ຽນບົດຮຽນກັບ ພາກສ່ວນກ່ຽວຂ້ອງຂອງລາວ ແລະ ຢ້ຽມຢາມສຳນັກງານ ບໍລິສັດສາຍສົ່ງໄຟຟ້າແຫ່ງຊາດລາວ (EDL-T) ຢູ່ນະຄອນຫຼວງວຽງຈັນ. ພ້ອມນັ້ນ, ຄະນະຍັງໄດ້ຢ້ຽມຢາມພື້ນຖານການປະຕິວັດ ຢູ່ແຂວງຫົວພັນ.

### 2) ສະຫາຍ ທອງສະຫວັນ ພົມວິຫານ, ຫົວໜ້າ ຄຕພ ໃຫ້ສຳພາດ ນັກຂ່າວຕ່າງປະເທດ



ວັນທີ 20/5/2024, ຄະນະໂທລະພາບ ແລະ ວິທະຍຸແຫ່ງຊາດຂອງເບລາຣຸດຊີ ໄດ້ສຳພາດ ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ທີ່ສຳນັກງານ ຄະນະພົວພັນຕ່າງປະເທດສູນກາງພັກ, ນັກຂ່າວເບລາຣຸດຊີ ໄດ້ຖາມກ່ຽວກັບບົດບາດການນຳພາຂອງພັກປະຊາຊົນປະຕິວັດລາວ ຕໍ່ການພັດທະນາເສດຖະກິດ-ສັງຄົມ ແລະ ການພົວພັນຮ່ວມມື ລະຫວ່າງ ລາວ-ເບລາຣຸດຊີ ໃນປະຈຸບັນ. ຕໍ່ກັບຄຳຖາມດັ່ງກ່າວ, ສະຫາຍ ທອງສະຫວັນ ພົມວິຫານ ໄດ້ແຈ້ງໃຫ້ຊາບ ເລີ່ມຕັ້ງແຕ່ໄລຍະການກໍ່ສ້າງພັກ ປປ ລາວ ຈົນກ້າວໄປສູ່ ຍາດເອົາເອກະລາດ ແລະ ສະຖາປະນາ ສປປ ລາວ ໃນປີ 1975. ນັບແຕ່ປີ 1986, ພັກ ປປ ລາວ ໄດ້ດຳເນີນນະໂຍບາຍປ່ຽນແປງໃໝ່. ສປປ ລາວ ຖືເອົາມະຕິກອງປະຊຸມໃຫຍ່ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ໃນແຕ່ລະໄລຍະ ເປັນພື້ນຖານໃນການຈັດຕັ້ງຜັນຂະຫຍາຍ ສອງໜ້າທີ່ຍຸດທະສາດໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ. ປະຈຸບັນ, ສປປ ລາວ ກຳລັງສືບຕໍ່ຈັດຕັ້ງປະຕິບັດມະຕິຂອງກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ສືບຕໍ່ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ 9.

ສຳລັບການພົວພັນ ສປປ ລາວ ແລະ ສ.ເບລາຣຸດຊີ, ພັກ-ລັດ ແລະ ປະຊາຊົນລາວ ເວລາໃດກໍ່ຍັງຈົດຈຳການຊ່ວຍເຫຼືອຂອງລັດຖະບານ ແລະ ປະຊາຊົນໂຊວຽດ ກໍຄື ລັດຖະບານ ແລະ ປະຊາຊົນ ເບລາຣຸດຊີ ໃນໄລຍະການການຕໍ່ສູ້ປົດປ່ອຍຊາດ ກໍຄື ໃນໄລຍະປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດໃນປະຈຸບັນ. ສປປ ລາວ ແລະ ສ.ເບລາຣຸດຊີ ໄດ້ມີມູນເຊື້ອການພົວພັນຮ່ວມມື ຮ່ວມກັນຢ່າງຍາວນານຕັ້ງແຕ່ສະໄໝອະດີດສະຫະພາບໂຊວຽດ. ນັບແຕ່ມື້ສ້າງຕັ້ງສາຍພົວພັນການທູດ 7/2/1994 ເປັນຕົ້ນມາ, ສອງປະເທດ ໄດ້ສືບຕໍ່ຊຸກຍູ້ສົ່ງເສີມສາຍພົວພັນຮ່ວມມືກັນຢ່າງໃກ້ຊິດ ເປັນຕົ້ນການຮ່ວມມືທາງດ້ານການເມືອງ, ເສດຖະກິດ-ການຄ້າ, ການສຶກສາ, ການທ່ອງທ່ຽວ ແລະ ດ້ານອື່ນໆ ເພື່ອຜົນປະໂຫຍດຂອງ ປະຊາຊົນສອງຊາດ. ພ້ອມດຽວກັນ, ຫົວໜ້າ ຄຕພ ຍັງໄດ້ຍົກໃຫ້ເຫັນການພົວພັນ ລະຫວ່າງ ພັກ ປປ ລາວ ກັບ 2 ພັກການເມືອງໃນເບລາຣຸດຊີ ຄື: ພັກ ເບລາຢາຣູດສ໌ ແລະ ພັກກອມມູນິດເບລາຣຸດຊີ ໄດ້ມີບາດກ້າວແຕກດອກອອກຜົນຫຼາຍຍິ່ງໆຂຶ້ນ.

### 3) ຄະນະຜູ້ແທນຂັ້ນສູງ ພັກກອມມູນິດ ຊາວກອມມູນິດຣັດເຊຍ ຢ້ຽມຢາມ ລາວ.



ໃນລະຫວ່າງ ວັນທີ 26-30/4/2024 ຜ່ານມາ, ຄະນະຜູ້ແທນຂັ້ນສູງຂອງ ພັກກອມມູນິດຊາວກອມມູນິດຣັດເຊຍ ນຳໂດຍ ສະຫາຍ ມາລິນໂກວິດຈ໌ ເຊີຣ໌ເກ ອາເລັກຊານໂດຣວິດຈ໌, ປະທານຄະນະບໍລິຫານງານ ສູນກາງພັກກອມມູນິດຊາວກອມມູນິດຣັດເຊຍ, ຮອງປະທານສະພານິຕິ ບັນຍັດເຂດ Altai ຂອງຣັດເຊຍ ພ້ອມຄະນະ ໄດ້ມາເຄື່ອນໄຫວຢ້ຽມຢາມ ສປປ ລາວ ເປັນຄັ້ງທີ 2 ນັບແຕ່ສອງພັກ ໄດ້ສ້າງຕັ້ງສາຍພົວພັນນຳກັນ. ການຢ້ຽມຢາມ ສປປ ລາວ ເພື່ອເພີ່ມທະວີ ແລະ ຮັດແໜ້ນສາຍພົວພັນມິດຕະພາບ ລະຫວ່າງ ສອງພັກ, ເພື່ອສຶກສາ, ແລກປ່ຽນ ແລະ ຖອດຖອນບົດຮຽນຈາກພັກເພື່ອນມິດ ທີ່ຍຶດໝັ້ນໃນລັດທິມາກ-ເລນິນ ແລະ ຊອກຫາຊ່ອງທາງຊຸກຍູ້ການຮ່ວມມືທາງດ້ານການຄ້າ-ການລົງທຶນ ຢູ່ ສປປ ລາວ. ຄະນະຜູ້ແທນດັ່ງກ່າວ, ໄດ້ເຂົ້າຢ້ຽມຂໍ່ານັບ ສະຫາຍ ທອງສະລິດ ມັງໜໍ່ເມກ ເລຂາທິການສູນກາງພັກ, ຫົວໜ້າຫ້ອງວ່າການສູນກາງພັກ, ຍັງໄດ້ພົບປະເຮັດວຽກສອງຝ່າຍກັບຄະນະຜູ້ແທນຝ່າຍລາວ ນຳໂດຍ ສະຫາຍ ທອງສະຫວັນ ພົມວິຫານ ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນ

ກາງພັກ. ນອກນີ້, ຍັງໄດ້ເຂົ້າພົບເຈົ້າແຂວງວຽງຈັນ ແລະ ບັນດາການນຳຂອງອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ແລະ ຢ້ຽມຢາມ ສະຖານທີ່ທາງປະຫວັດສາດ ແລະ ວັດທະນະທຳ ຢູ່ນະຄອນຫລວງວຽງຈັນ ແລະ ແຂວງວຽງຈັນ.

**4) ຄະນະພົວພັນຕ່າງປະເທດສູນກາງພັກ ຈັດປາຖະກະຖາ ວັນສຳຄັນຂອງພັກ, ຂອງຊາດ”**




ວັນທີ 20/5/2024, ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຈັດປາຖະກະຖາເຜີຍແຜ່ເອກະສານວັນກຳມະກອນສາກົນ ຄົບຮອບ 138 ປີ (1/5/1886-1/5/2024); ວັນໄຊຊະນະບັ້ນຮົບດຽນບຽນຟູ ຄົບຮອບ 70 ປີ (7.5.1954-7.5.2024); ວັນຜ່າວົງປິດລ້ອມຂອງກອງພັນທີ 2 ວິລະຊົນ ທີ່ທົ່ງໄຫຫີນຊຽງຂວາງ ຄົບຮອບ 65 ປີ (18.5.1959-18.5.2024) ແລະ ວິລະກຳໂຕນຄຸກຢ່າງມະຫັດສະຈັນຂອງບັນດາການນຳຂອງພັກ ແລະ ແນວລາວຮັກຊາດ ຄົບຮອບ 64 ປີ (2/5/1960-24/5/2024), ໂດຍໃຫ້ກຽດເຜີຍແຜ່ ແລະ ເປັນປະທານຂອງ ສະຫາຍ ເກີລໍ່ ຢ່າງກໍ່, ກຳມະການຄະນະພັກ, ເລຂາໜ່ວຍພັກ, ຫົວໜ້າກົມຈັດຕັ້ງ-ພະນັກງານ, ມີບັນດາຄະນະພັກ, ຄະນະກົມ, ພະແນກ ແລະ ພະນັກງານທົ່ວຄະນະພົວພັນຕ່າງປະເທດສູນກາງພັກ ເຂົ້າຮ່ວມ ຈຳນວນ 130 ສະຫາຍ. ໃນພິທີ ສະຫາຍ ເກີລໍ່ ຢ່າງກໍ່ ໄດ້ຍົກໃຫ້ເຫັນປະຫວັດຄວາມເປັນມາ ແລະ ຄວາມສຳຄັນຂອງບັນດາວັນສຳຄັນດັ່ງກ່າວນີ້ ທີ່ໄດ້ຕິດພັນກັບການປົດປ່ອຍຊາດ, ຄວາມສາມັກຄີພິເສດລາວ-ຫວຽດນາມ ແລະ ການນຳພາທີ່ສະຫຼາດສ່ອງໃສຂອງພັກ.

## IV.ການເຄື່ອນໄຫວຂອງ 3 ອົງການຈັດຕັ້ງມະຫາຊົນ ຄຕພ.

**1. ໜ່ວຍຊາວໜຸ່ມກົມຄົ້ນຄວ້າ ແລະ ພົວພັນຫຼາຍຝ່າຍ ຈັດກອງປະຊຸມໃຫຍ່ຄັ້ງທີ II.**



ວັນທີ 30/4/2024, ໜ່ວຍຊາວໜຸ່ມກົມຄົ້ນຄວ້າ ແລະ ພົວພັນຫຼາຍຝ່າຍ (ຄຄພ) ໄດ້ດຳເນີນກອງປະຊຸມໃຫຍ່ ຄັ້ງທີ II ຂອງໜ່ວຍຊາວໜຸ່ມ ກົມ ຄຄພ ພາຍໃຕ້ການເປັນຄະນະປະທານຂອງ ສະຫາຍ ວົງຮີ ເນັງມີງວ່າງ, ຮັກສາການເລຂາໜ່ວຍພັກກົມ ຄຄພ, ມີ ສະຫາຍ ຕາງໜ້າຄະນະບໍລິຫານງານຊາວໜຸ່ມ ຄຕພ, ຕາງໜ້າຄະນະໜ່ວຍຊາວໜຸ່ມພາຍໃນ ຄຕພ ແລະ ສະມາກຊິກຊາວໜຸ່ມກົມ ຄຄພ ເຂົ້າຮ່ວມ. ກອງປະຊຸມໄດ້ຜ່ານ ບົດລາຍງານການເມືອງ, ແຜນການເຄື່ອນໄຫວໃນຕໍ່ໜ້າ ແລະ ບົດສຳຫຼວດນຳພາຂອງຄະນະໜ່ວຍຊາວໜຸ່ມ ໄດ້ຕີລາຄາຜົນສຳເລັດ, ຈຸດດີ, ຈຸດອ່ອນ, ຂໍ້ສະດວກ-ຂໍ້ຫຍຸ້ງຍາກ ໃນໄລຍະ 5 ປີຜ່ານມາ; ທີ່ກອງປະຊຸມຍັງໄດ້ ໃຊ້ສິດປະຊາທິປະໄຕປ່ອນບັດເລືອກຕັ້ງເອົາຄະນະໜ່ວຍຊຸດໃໝ່ ເຊິ່ງປະກອບມີ ສະຫາຍ ມິດຕະພອນ ລາຊະຈັນດາ, ເປັນເລຂາໜ່ວຍ; ສະຫາຍ ນາງ ຂັນປະເສີດ ສະແຫວງສຶກສາ, ເປັນຮອງເລຂາ, ທັງເປັນປະທານກວດກາ ໜ່ວຍ ແລະ ສະຫາຍ ດາລາທິບ ໝື່ນທະລັງສີ, ເປັນກຳມະການໜ່ວຍຊາວໜຸ່ມກົມ ຄຄພ.